# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ປະຈຳໄຕມາດ 2/2018 ແລະ ການເຜີຍແຜ່ລາງວັນທີ່ ທຄຕລ ໄດ້ຮັບ.

ໃນວັນທີ 17-18 ກໍລະກົດ 2018, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳໄຕມາດ 02/2018 ຂຶ້ນທີ່ຫ້ອງປະຊຸມໃຫຍ່ຊັ້ນ 5 ຕຶກ C ສຳນັກງານໃຫຍ່ ທຄຕລ, ພາຍໃຕ້ການເປັນປະທານຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ມີຜູ້ເຂົ້າຮ່ວມຂັ້ນຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະສູນ ແລະ ພະນັກງານທີ່ກ່ຽວຂ້ອງ ລວມທັງໝົດປະມານ 80 ທ່ານ.




ກອງປະຊຸມ ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ໃນຂອບເຂດທົ່ວປະເທດ ໃນໄລຍະ 06 ເດືອນຕົ້ນປີ 2018, ເຊິ່ງໄດ້ຍົກໃຫ້ເຫັນຜົນສຳເລັດ ແລະ ບັນດາຂໍ້ຄົງຄ້າງໃນການປະຕິບັດງານແຕ່ລະດ້ານ ເພື່ອປຶກສາຫາລືການແກ້ໄຂໃຫ້ດີຂຶ້ນໃນຕໍ່ໜ້າ.

ຈາກການລາຍງານ-ປຶກສາຫາລື ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນກອງປະຊຸມ 2 ວັນ ໄດ້ມີບັນຍາກາດຟົດຟື້ນ ແລະ ມີປະສິດທິຜົນດີ. ໃນ 06 ເດືອນຕົ້ນປີ 2018 ການດຳເນີນງານໃນແຕ່ລະດ້ານຂອງ ທຄຕລ ໂດຍສ່ວນຫຼາຍໄດ້ເປັນໄປຕາມແຜນການທີ່ກຳນົດໄວ້, ຜົນການດຳເນີນທຸລະກິດມີກຳໄລຕາມແຜນການ.




ໃນຕອນທ້າຍຂອງກອງປະຊຸມ ຄະນະບໍລິຫານ ຍັງໄດ້ນຳສະເໜີຜົນງານທີ່ ທຄຕລ ໄດ້ຮັບລາງວັນດີເດັ່ນຈາກວາລະສານຕ່າງປະເທດ ແລະ ລາງວັນຊະນະເລີດໃນງານແຂ່ງຂັນລະດັບປະເທດ Lao ICT Award 2018 ດັ່ງລາຍລະອຽດລຸ່ມນີ້:

❖ ວາລະສານການທະນາຄານ ແລະ ການເງິນອາຊີ (Asian Banking and Finance Magazine) ມອບ 2 ລາງວັນດີເດັ່ນໃຫ້ແກ່ ທຄຕລ ໃນງານປະກາດລາງວັນດ້ານການທະນາຄານ ແລະ ການເງິນອາຊີ ປະຈຳປີ 2018 (Asian Banking & Finance Awards 2018) ຈັດຂຶ້ນໃນວັນທີ 12 ກໍລະກົດ 2018 ທີ່ປະເທດສິງກະໂປ. ໃນປີ 2018, ທຄຕລ ໄດ້ຂຽນບົດຄວາມກ່ຽວກັບຜະລິດຕະພັນ BCOME ແລະ BCEL OnePay ສົ່ງເຂົ້າຊີງລາງວັນ; ລາງວັນທີ່ ທຄຕລ ໄດ້ຮັບ ແມ່ນມາຈາກຂະແໜງທະນາຄານບໍລິການລູກຄ້າທົ່ວໄປ ຫຼື Retail Banking Awards 2018:

+ ລາງວັນດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການຜ່ານລະບົບມືຖື ແຫ່ງປີ (Mobile Banking Initiative of the year – Lao PDR)
+ ລາງວັນດີເດັ່ນດ້ານແນວຄິດລິເລີ່ມເພື່ອການເຂົ້າເຖິງບໍລິການດ້ານການເງິນຢ່າງທົ່ວເຖິງ ແຫ່ງປີ (Financial Inclusion Initiative of the year – Laos)

ທຄຕລ ໄດ້ຖືກຄັດເລືອກໃຫ້ໄດ້ຮັບລາງວັນຈາກວາລະສານດັ່ງກ່າວເປັນປີທີ 7 ຕິດຕໍ່ກັນ.







**ລາງວັນດີເດັ່ນດ້ານແນວຄິດລິເລີ່ມ ເພື່ອການເຂົ້າເຖິງບໍລິການດ້ານການເງິນຢ່າງທົ່ວເຖິງ ແຫ່ງປີ**
**(Financial Inclusion initiative of the Year – Laos)**

**ລາງວັນດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການຜ່ານລະບົບ ມືຖື ແຫ່ງປີ**
**(Mobile Banking Initiative of the Year – Laos)**




❖ ຜະລິດຕະພັນ BCEL OneHeart ຍາດໄດ້ລາງວັນຊະນະເລີດໃນງານແຂ່ງຂັນລະດັບປະເທດ Lao ICT Award 2018:

ງານປະກວດ Lao ICT Award ໄດ້ຈັດຂຶ້ນໃນວັນທີ 07/07/2018 ຢູ່ທີ່ ຫໍວັດທະນະທຳແຫ່ງຊາດ ນະຄອນຫຼວງວຽງຈັນ, ຈັດຂຶ້ນໂດຍ ກະຊວງໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ, ໂດຍມີຈຸດປະສົງເພື່ອເປັນການສະໜັບສະໜູນບັນດາບຸກຄົນ ຫຼື ພາກສ່ວນຕ່າງໆ ໄດ້ມີໂອກາດສະແດງ

ຜົນງານ, ຄວາມສາມາດທາງດ້ານ ICT ຂອງຕົນ ພ້ອມທັງເປັນການສົ່ງເສີມຜົນງານ ICT ຂອງລາວເຂົ້າຮ່ວມແຂ່ງຂັນໃນເວທີພາກພື້ນອາຊຽນກໍຄືໂຄງການ ASEAN ICT Award.




ຕະຫຼອດໄລຍະເວລາທີ່ຜ່ານ, ນອກຈາກ ທຄຕລ ຈະເອົາໃຈໃສ່ດຳເນີນທຸລະກິດໃຫ້ມີປະສິດທິພາບ ແລະ ປະສິດທິຜົນແລ້ວ ທຄຕລ ຍັງໄດ້ເປັນເຈົ້າການໃນດ້ານວຽກງານຊ່ວຍເຫຼືອສັງຄົມດ້ວຍປະກອບສ່ວນທຶນຮອນ ແລະ ໝູນໃຊ້ເຄື່ອງມືອັນທັນສະໄໝຂອງຕົນປະກອບສ່ວນເຂົ້າໃນການຊຸກຍູ້ຊ່ວຍເຫຼືອສັງຄົມ ຊຶ່ງໃນປີ 2018 ທຄຕລ ໄດ້ມີການເປີດນຳໃຊ້ BCEL OneHeart ອັນເປັນຟັງຊັນໜຶ່ງຂອງ BCEL One ເພື່ອເປັນຊ່ອງທາງອັນທັນສະໄໝທີ່ໃຫ້ພະນັກງານ ແລະ ລູກຄ້າຂອງ ທຄຕລ ສາມາດບໍລິຈາກເງິນຕາມຄວາມສາມາດຂອງຕົນເຂົ້າໃນໂຄງການຊ່ວຍເຫຼືອສັງຄົມຕ່າງໆຢ່າງມີປະສິດຕິຜົນ ແລະ ມີຄວາມໂປ່ງໃສ. ຫຼັງຈາກໄດ້ຮັບລາງວັນອັນສູງກຽດດັ່ງກ່າວແລ້ວ ໃນຂັ້ນຕໍ່ໄປ BCEL OneHeart ຈະເປັນຕົວແທນຈາກ ສປປ ລາວ ເພື່ອເຂົ້າຊີງລາງວັນໃນລະດັບພາກພື້ນອາຊຽນໃນຂັ້ນຕໍ່ໄປ.




ລາງວັນທີ່ ທຄຕລ ໄດ້ຮັບດັ່ງກ່າວ, ເປັນສິ່ງທີ່ຢັ້ງຢືນເຖິງຄຸນນະພາບໃນການບໍລິການຂອງ ທຄຕລ, ສະແດງເຖິງການຍອມຮັບຈາກສາກົນ ແລະ ຈາກສັງຄົມລາວຕໍ່ ທຄຕລ ໄດ້ເປັນຢ່າງດີ.